# ວິທີທາງຊ່ອຍຕ່າງໆສຳຫລັບພໍ່ແມ່

## ວິທີໂອ້ລົມກັບເດັກຂອງທ່ານກ່ຽວກັບສົງຄາມ

**ທັດສະນະຂອງພວກເຮົາ ສ້າງສະພາບການ.  ຕ້ອງເປັນຄົນສຸກຂຸມ ແລະ ມີການຮັບປະກັນ.**

**ເພື່ອຈະຊ່ອຍເດັກຂອງທ່ານໄດ້ນັ້ນຕ້ອງ:**

- ເນັ້ນຫນັກໃສ່ໃນເລື້ອງຄວາມປອດພັຍ; ທົບທວນເບິ່ງຄວາມປອດພັຍຂອງຄອບຄົວ
- ແຈ້ງໃຫ້ພະນັກງານປົກຄອງໃຫ້ເພີ້ມຂຍາຍລະບຽບຮັກສາຄວາມປອດພັຍສູງຂື້ນ

**ທີ່ບ້ານຈັດໃຫ້ມີ ແລະ ສນັບສນູນໃຫ້ມີສະພາບແວດລ້ອມທີ່ປອດພັຍ:**

- ອະນຸຍາດ ແລະ ຊຸກຍູ້ໃຫ້ເດັກຂອງທ່ານໄດ້ສະແດງຄວາມຮູ້ສຶກຂອງເຂົາເຈົ້າອອກ
- ເປັນນັກຟັງທີ່ດີ (ປ່ອຍໃຫ້ເດັກເປັນຜູ້ເວົ້າຫລາຍໆ)
- ເປັນຜູ້ມັກຕິດຕາມ
- ຮັບຮູ້ເຖິງຄວາມຮູ້ສຶກ
- ຈັດໃຫ້ມີການແນະນຳຊ່ວຍເຫລືອ ແລະ ຮັບປະກັນ

**ວິທີເພື່ອຊ່ອຍເດັກຂອງທ່ານປະເຊີນກັບຂ່າວຕ່າງໆ:**

ສຳຫລັບພວກນັກຮຽນອາຍຸຊັ້ນປະຖົມສຶກສາ

- ຫລີກເວັ້ນບໍ່ໃຫ້ເບິ່ງຄວາມໂຫດຮ້າຍຮຸນແຮງ ແລະ ການສະແດງ (ຕົວຢ່າງ, ຊາກສົບຄົນຕາຍ, ຮ່າງກາຍອາບເລືອດ, ຕຳຣວດກັບປືນ)
- ເບິ່ງໂທຣະທັດ, ຮ່ວມກັນກັບເດັກຂອງທ່ານ, ພວກນັກຮຽນເຂົ້າຮ່ວມການແກ້ໄຂບັນຫາ ໃນລາຍການໂທຣະທັດ (ຕົວຢ່າງ, ພວກເດັກຊ່ວຍກັນແລະກັນ, ບອກຜູ້ໃຫຍ່ເມື່ອມີບາງຢ່າງຜິດປົກກະຕິ).
- ເນັ້ນຫນັກການເຮັດວຽກແກ້ໄຂບັນຫາຮ່ວມກັນຂອງພວກນັກຮຽນ.

ສຳຫລັບພວກນັກຮຽນອາຍຸໂຮງຮຽນພາກກາງ ແລະ ຊັ້ນມັທຍົມ

- ເບິ່ງຂ່າວເລື້ອງຕ່າງໆກັບພວກເດັກ
- ຖາມຄຳຖາມຕ່າງໆເຊັ່ນ:
  1. ເຈົ້າຄິດ ແລະ ຮູ້ສຶກສາກ່ຽວກັບສິ່ງທີ່ເຈົ້າເຫັນນັ້ນແນວໃດ?
  2. ເຈົ້າຄິດວ່າເປັນຫຍັງມັນຈຶ່ງເກີດຂື້ນ?